**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ

ຫ້ອງການ

ເລກທີ...541...... /ຫກ

ນະຄອນຫຼວງວຽງຈັນ, ວັນທີ 10 ກໍລະກົດ..2023

# ແຈ້ງການ

ເຖິງ: ບັນດາ ຊາວໜຸ່ມ, ເຍົາວະຊົນລາວ ໃນຂອບເຂດທົ່ວປະເທດ.

**ເລື່ອງ: ເຊີນເຂົ້າຮ່ວມແຂ່ງຂັນແຕ້ມຮູບ ພາຍໃຕ້ຫົວຂໍ້:** ***Me, My Body, My Planet, My Future*** ຕິດພັນກັບ **"ທັກສະສີຂຽວຂອງຊາວໜຸ່ມເພື່ອຍືນຍົງຂອງໂລກ"**

- ອີງໃສ່ ຍຸດທະສາດການພັດທະນາຊາວໜຸ່ມ, ເຍົາວະຊົນລາວ ປີ 2021-2030;
- ອີງຕາມ ແຜນການຮ່ວມມືລະຫວ່າງ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ກັບ ອົງການ UNFPA ປະຈໍາປີ 2023;
- ອີງຕາມ ແຜນການຈັດກິດຈະກໍາສະເຫຼີມສະຫຼອງວັນໄວໜຸ່ມສາກົນ ປະຈໍາປີ 2023.

ຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຊາບວ່າ: ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ຮ່ວມກັບ ອົງການສະຫະປະຊາຊາດກອງທຶນສໍາລັບປະຊາກອນ UNFPA ໄດ້ຈັດກິດຈະກໍາແຂ່ງຂັນແຕ້ມຮູບ **ພາຍໃຕ້ຫົວຂໍ້:** ***Me, My Body, My Planet, My Future*** ຕິດພັນກັບ **"ທັກສະສີຂຽວຂອງຊາວໜຸ່ມ ເພື່ອຄວາມຍືນຍົງຂອງໂລກ"** ເພື່ອເປັນການສະເຫຼີມສະຫຼອງວັນໄວໜຸ່ມສາກົນ ປະຈໍາປີ 2023 ຈຸດປະສົງແມ່ນເປັນການເປີດໂອກາດໃຫ້ຊາວໜຸ່ມ, ເຍົາວະຊົນ ຜູ້ທີ່ມີພອນສະຫວັນມີຄວາມມັກຮັກໃນການແຕ້ມຮູບ ໄດ້ເຂົ້າຮ່ວມກິດຈະກໍາດັ່ງກ່າວ ພ້ອມທັງເປັນການປູກຈິດສໍານຶກໃຫ້ຊາວໜຸ່ມ, ເຍົາວະຊົນລາວບັນດາເຜົ່າ ໄດ້ຮູ້ຮັກທໍາມະຊາດ ແລະ ອານຸລັກຮັກສາສິ່ງແວດລ້ອມ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

## 1. ເງື່ອນໄຂການເຂົ້າຮ່ວມແຂ່ງຂັນ

1) ຜູ້ເຂົ້າຮ່ວມການແຂ່ງຂັນແຕ້ມຮູບ ອາຍຸຕ້ອງ ບໍ່ເກີນ 35 ປີ, ບໍ່ຈໍາກັດເພດ, ຊົນເຜົ່າ;
1) ຂະໜາດຂອງຮູບແຕ້ມແມ່ນ A3 ລະບາຍສີດ້ວຍສໍສີທຽນ, ສີນໍ້າ, ສໍສີໄມ້ ແລະ ອື່ນໆ;
2) ເນື້ອໃນຕ້ອງສ່ອງແສງເຖິງການປູກຈິດສໍານຶກທັກສະສີຂຽວ, ການອະນຸລັກຮັກສາສິ່ງແວດລ້ອມ ຕິດພັນກັບຫົວຂໍ້ກິດຈະກໍາ (ຄັດຕິດຄໍາອະທິບາຍມາພ້ອມຮູບພາບຄວາມຍາວບໍ່ກາຍ 1 ໜ້າເຈ້ຍ A4);
3) ຫ້າມລອກລຽນແບບຮູບແຕ້ມຂອງຄົນອື່ນ (ຕ້ອງແຕ້ມດ້ວຍຕົນເອງ);
4) ຮູບພາບທີ່ສົ່ງເຂົ້າປະກວດແມ່ນບໍ່ອະນຸຍາດໃຫ້ນໍາໃຊ້ລະບົບຊອບແວດິຈິຕອນເຂົ້າມາຊ່ວຍເປັນຕົ້ນ Photoshop, illustrator, paint ແລະ ອື່ນໆ;
5) ການສົ່ງຜົນງານເຂົ້າປະກວດແມ່ນສາມາດສົ່ງໄດ້ຄົນລະ 01 ຮູບພາບເທົ່ານັ້ນ; ສໍາລັບການສົ່ງຂອງຜູ້ທີ່ຢູ່ຕ່າງແຂວງ ແມ່ນຝາກຂົນສົ່ງຮຸ່ງອາລຸນ ສາຂາ 3 ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ ຫຼື ສົ່ງ

ໂດຍກົງຢູ່ ຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ບ້ານໂພນທັນ ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ ຫຼື ໂທສອບຖາມຂໍ້ມູນຜ່ານທາງເບີໂທລະສັບສາຍດ່ວນໃຫ້ຄໍາປຶກສາແກ່ຊາວໜຸ່ມ-ເຍົາວະຊົນ 1554; Whatsapp: 55300195, 55361055, 55132046

6) ເປີດຮັບສະໝັກວັນທີ 12 ກໍລະກົດ 2023 ແລະ ປິດຮັບໃນວັນທີ 1 ສິງຫາ 2023
7) ປະກາດຜູ້ທີ່ໄດ້ຮັບລາງວັນ ວັນທີ 5 ສິງຫາ 2023
8) ຜູ້ທີ່ໄດ້ລາງວັນຊະນະເລີດຈະໄດ້ຂຶ້ນນໍາສະເໜີຜົນງານຂອງຕົນເອງ ໃນງານສະເຫຼີມສະຫຼອງ ວັນໄວໜຸ່ມສາກົນ ແລະ ມອບລາງວັນຊະນະເລີດ ໃນວັນທີ11 ສິງຫາ 2023 ທີ່ ສູນການຄ້າລາວໄອເຕັກ.

## 2. ປະເພດລາງວັນ

1) ລາງວັນທີ 1 ລາງວັນຊະນະເລີດ ອຸປະກອນການສຶກສາ ມູນຄ່າ 2.500.000 ກີບ ພ້ອມໃບຍ້ອງຍໍຈາກ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ;
2) ລາງວັນທີ 2 ລາງວັນຮອງຊະນະເລີດ ອຸປະກອນການສຶກສາ ມູນຄ່າ 1.500.000 ກີບ ພ້ອມໃບຊົມເຊີຍຈາກ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ;
3) ລາງວັນທີ 3 ລາງວັນຮອງຊະນະເລີດ ອຸປະກອນການສຶກສາ ມູນຄ່າ 1.000.000 ກີບ ພ້ອມໃບຊົມເຊີຍຈາກ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ;
4) ລາງວັນທີ 4 ລາງວັນຊົມເຊີຍ ອຸປະກອນການສຶກສາ ມູນຄ່າ 500.000 ກີບ ພ້ອມໃບຊົມເຊີຍ ຈາກ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງຊາວໜຸ່ມ, ເຍົາວະຊົນລາວ ໃນຂອບເຂດທົ່ວປະເທດ ເພື່ອເຂົ້າຮ່ວມການແຂ່ງຂັນ.

ຫົວໜ້າຫ້ອງການ

ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ຫ້ອງການ

ນ.ອຸໄລ ຈັນທະວົງ